ອ້າຍອິນທະຫວາເອີຍ !

ສ່ວນວ່າກອນກາບອ້າຍ ຢາຍຄ່ອງສມອງໄຫຼ
ອ່ານໄປທຳໃຫ້ນາງຄິດ ພາບມອງເຫັນແຈ້ງ
ອ້າຍຖແລງເປັນຄຳເວົ້າ ຫວານເບົາໆຟັງມ່ວນ
ຊວນຄະນຶງບ່ອນນັ້ນ ສີ່ວັນນັ້ນທີ່ຮ່ວມກັນ ເດນໍ

ສີ່ປີ່ເຄີຍຜູກຫມັ້ນ ສັມພັນຮ່ວມສະຖາບັນ
ບາດສີ່ວັນພັດແຮງຫນັກ ຮັກກັນຕອນທ້າຍ
ກຽວເບີດ ເຮົາຫມາຍໄວ້ ສັນຍາໃຈເຮົາເລີ້ມໃຫມ່
ເຮົາໄດ້ວຽນພົບພໍ້ ເຫັນແລ້ວຢ່າຈາກກັນ ໃດເດີ

ຫ່າງໃຫ້ຫ່າງແຕ່ບ້ານ ຝາກໃຈຮ່ວມຮວມແນວຄິດ
ສິດອາຈານໃຫ້ກົມກຽວ ກ່ຽວສັມພັນໄວ້
ນານຫຼາຍປີທີ່ເຮົາໄດ້ ທາວໄຍຫາທົ່ວທຸກບ່ອນ
ສະອອນເດ ບາດພົບພໍ້ ກອດຄໍໄຫ້ໃສ່ກັນ

ອາຈານທຸກທ່ານນັ້ນ ນ້ຳຕາຫຼັ່ງຍ້ອນຍິນດີ
ກຽຕສັກສີບໍ່ເຄີຍຕົກ ຍົກທ່ານສູງສເມີດ້ານ
ບໍ່ເຮັດຕາມຄຳເວົ້າ ປຸທຸຊິນຊັ້ນຕ່ຳ
ວ່າຄີນຕົກຢູ່ນ້ຳ ຫົວພຽງພື້ນສ່ຳກັນ ບໍ່ແມ່ນເດີ

ງານບາສີໃນມື້ນັ້ນ ທ່ານຈູດຕໍ່ແສງທຽນ
ນັກຮຽນເຮົາຈະຂໍຈົດ ຈື່ຈຳວັນນັ້ນ
ຜ່ານມາແສງທຽນກ້າ ວິຊາຄຣູໄດ້ຈາກທ່ານ
ນານຈົນຕຣາບຊົ່ວຟ້າ ຍັງແສງກ້າຢູ່ດັ່ງເດີມ ທ່ານເອີຍ

ໂດຍ ສາວຫຼັກເຈັດ